**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະພົວພັນຕ່າງປະເທດສູນກາງພັກ ເລກທີ 200 /ຄຕພ

ນະຄອນຫຼວງວຽງຈັນ, ວັນທີ 26 JAN 2026

# ຂໍ້ຕົກລົງ
# ວ່າດ້ວຍເຄື່ອງໝາຍຂອງຄະນະພົວພັນຕ່າງປະເທດສູນກາງພັກ

- ອີງຕາມ ມະຕິຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກສະບັບເລກທີ 310/ຄລສພ, ລົງວັນທີ 23 ກຸມພາ 2023;
- ອີງຕາມ ແຈ້ງການ ການແຂ່ງຂັນອອກແບບເຄື່ອງໝາຍ ຫຼື ໂລໂກ້ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ສະບັບເລກທີ 03/ຄຕພ.ອຄສ, ລົງວັນທີ 28 ກໍລະກົດ 2025;
- ອີງຕາມ ການຕົກລົງເຫັນດີ ຂອງ ຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ ໃນຄັ້ງວັນທີ 21 ມັງກອນ 2026.

## ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕົກລົງ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດເຄື່ອງໝາຍ, ອົງປະກອບ ແລະ ຄຳອະທິບາຍ, ການຄຸ້ມຄອງ, ນຳໃຊ້ ແລະ ຂໍ້ຫ້າມ ກ່ຽວກັບເຄື່ອງໝາຍຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ເພື່ອເປັນບ່ອນອີງໃຫ້ແກ່ ການຈັດຕັ້ງປະຕິບັດຕົວຈິງໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບ ແລະ ກົດໝາຍ ກໍຄືນິຕິກຳຕ່າງໆກ່ຽວກັບ ຄະນະພົວພັນຕ່າງປະເທດສູນກາງພັກ, ແນໃສ່ຮັບປະກັນຄວາມເປັນເອກະພາບ, ຄວາມເປັນລະບຽບຮຽບຮ້ອຍ, ຍົກສູງລະບຽບວິໄນ, ສະຕິຕໍ່ການຈັດຕັ້ງ ແລະ ຄວາມຮັບຜິດຊອບ ຂອງພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ໃນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງໝາຍຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.

**ມາດຕາ 2: ຄວາມໝາຍ, ຄວາມສຳຄັນ**

ເຄື່ອງໝາຍຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ແມ່ນກາສັນຍາລັກປະຈຳສຳນັກງານ, ອົງການ ແລະ ວຽກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກ, ປະດິດສ້າງຂຶ້ນບົນພື້ນຖານການຄົ້ນຄວ້າ ແລະ ສະຕິປັນຍາລວມໝູ່ ໂດຍຜ່ານຂະບວນການແຂ່ງຂັນປະກວດອອກແບບຂອງ ຫ້ອງການ ແລະ ບັນດາກົມ ທີ່ວຄະນະພົວພັນຕ່າງປະເທດສູນກາງພັກ. ເຄື່ອງໝາຍຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ສ່ອງແສງໃຫ້ເຫັນເຖິງມູນເຊື້ອ ແລະ ທາດແທ້ປະຕິວັດອັນສະຫງ່າງາມຂອງ ຄະນະພົວພັນຕ່າງປະເທດສູນກາງພັກ, ເປັນສັນຍາລັກທີ່ບົ່ງບອກເຖິງພາລະບົດບາດໃນການເປັນເສນາທິການໂດຍກົງໃຫ້ແກ່ ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນການຄົ້ນຄວ້າແຜນຍຸດທະສາດ, ແນວທາງນະໂຍບາຍການພົວພັນຕ່າງປະເທດຂອງພັກ; ຕາງໜ້າສູນກາງພັກໃນການພົວພັນ - ຮ່ວມມືກັບພັກການເມືອງຕ່າງປະເທດ ໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ຕາມການມອບໝາຍຂອງຂັ້ນເທິງ ພ້ອມທັງເປັນເຈົ້າການຊີ້ນຳ, ຄຸ້ມຄອງການເຄື່ອນໄຫວວຽກງານພົວພັນຕ່າງປະເທດຂອງອົງການຈັດຕັ້ງພັກ ແລະ ການທູດປະຊາຊົນ ໃຫ້ມີຄວາມເປັນເອກະພາບ ໂດຍຜ່ານປະຕູດຽວ. ນອກຈາກນີ້, ຍັງສ່ອງແສງໃຫ້ເຫັນເຖິງຖານະຂອງກົງຈັກຊ່ວຍວຽກຂອງສູນກາງພັກ ກໍຄືການນຳຂັ້ນສູງຂອງ ພັກປະຊາຊົນປະຕິວັດລາວ.

## ໝວດທີ II
## ເຄື່ອງໝາຍ ຄະນະພົວພັນຕ່າງປະເທດສູນກາງພັກ

**ມາດຕາ 3: ເຄື່ອງໝາຍ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ຖືກຮັບຮອງຢ່າງເປັນທາງການ**

**ມາດຕາ 4: ອົງປະກອບ ແລະ ຄຳອະທິບາຍຄວາມໝາຍ**

ເຄື່ອງໝາຍຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ປະກອບມີ 10 ອົງປະກອບຄື: ທຸງຊາດລາວ; ກາພັກປະຊາຊົນປະຕິວັດລາວ; ໜ່ວຍໂລກ; ຮວງເຂົ້າສຸກ; ຊື່ຫຍໍ້ "ຄຕພ"; ຮູບໂບສີແດງ; ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ; COMITÉ DES RELATIONS EXTÉRIEURES DU COMITÉ CENTRAL DU PARTI (ພາສາຝຣັ່ງ); ຂອບສີຄຳ; ວົງມົນສີແດງ. ອົງປະກອບຂອງເຄື່ອງໝາຍ ຄະນະພົວພັນຕ່າງປະເທດສູນກາງພັກ ມີຄຳອະທິບາຍຄວາມໝາຍດັ່ງລຸ່ມນີ້:

**1) ທຸງຊາດລາວ**



**ສະແດງເຖິງ:** ເອກະລາດແຫ່ງຊາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດລາວ, ທັງສະແດງໃຫ້ເຖິງ ຄະນະພົວພັນຕ່າງປະເທດສູນກາງພັກເປັນອົງການທີ່ຕັ້ງຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**2) ກາພັກປະຊາຊົນປະຕິວັດລາວ (ຮູບກ່ຽວ ແລະ ຄ້ອນຕີ)**



**ໝາຍເຖິງ:** ການຈັດຕັ້ງການເມືອງສູງສຸດຂອງ ຊົນຊັ້ນກຳມະກອນ ແລະ ຂອງລະບອບປະຊາທິປະໄຕ ປະຊາຊົນລາວ, ເປັນຕົວແທນທີ່ຈິງຮັກພັກດີຕໍ່ສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳມະກອນລາວ, ຊາວຜູ້ອອກແຮງງານລາວ ແລະ ຂອງຊາດລາວທັງໝົດ ທັງສະແດງເຖິງການເປັນເສນາທິການໃຫ້ແກ່ ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ.

**3) ໜ່ວຍໂລກ**



**ໝາຍເຖິງ:** ການຄົ້ນຄວ້າແຜນຍຸດທະສາດ, ແນວທາງນະໂຍບາຍການພົວພັນຕ່າງປະເທດຂອງພັກ, ການພົວພັນ-ຮ່ວມມື ກັບພັກການເມືອງຂອງຕ່າງປະເທດໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ແລະ ການທູດປະຊາຊົນ.

**4) ຮວງເຂົ້າສຸກ (ສີເຫຼືອງ)**



**ໝາຍເຖິງ**: ຜົນສຳເລັດແຫ່ງການຈັດຕັ້ງປະຕິບັດການຜັນຂະຫຍາຍບັນດາແນວທາງນະໂຍບາຍການຕ່າງປະເທດຂອງພັກ ໃຫ້ປະສົບຜົນສຳເລັດ ແລະ ປະກົດຜົນເປັນຈິງ ບົນພື້ນຖານການຄົ້ນຄວ້າຢ່າງລະອຽດເລິກເຊິ່ງ, ມີວິໄສທັດກວ້າງໄກ ແລະ ປະຕິບັດແນວທາງຂອງພັກໄດ້ຢ່າງຖືກຕ້ອງ.

**5) ຄຕພ:**

**ໝາຍເຖິງ** ຊື່ໂດຍຫຍໍ້ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.

**6) ໂບສີແດງ**

**ໝາຍເຖິງ:** ການເຊີດຊູກຽດສັກສີ ແລະ ໄຊຊະນະແຫ່ງການປະຕິວັດ ພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນປະຕິວັດລາວ ແລະ ອຸດົມການຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ.

**7) ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ**

**ໝາຍເຖິງ**: ອົງການຈັດຕັ້ງຂອງພັກ ຂຶ້ນກັບຄະນະບໍລິຫານງານສູນກາງພັກ, ມີຖານະທຽບເທົ່າຄະນະຂອງພັກຂັ້ນສູນກາງ; ມີພາລະບົດບາດເປັນເສນາທິການໂດຍກົງ ໃຫ້ແກ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ.

**8) COMITÉ DES RELATIONS EXTÉRIEURES DU COMITÉ CENTRAL DU PARTI (ພາສາຝຣັ່ງ):**

ເປັນການສ້າງພາບລັກໃຫ້ມີຄວາມທັນສະໄໝ ແລະ ເປັນສາກົນ, ພ້ອມທັງເປັນການປະຕິບັດພັນທະຕໍ່ອົງການຝຣັ່ງໂກໂຟນີສາກົນ (Organisation internationale de la Francophonie “OIF”) ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າເປັນສະມາຊິກສົມບູນ ໃນປີ 1991.

**9) ຂອບສີຄຳ**



**ໝາຍເຖິງ:** ຍຸດທະສາດການນຳພາ-ຊີ້ນຳຮອບດ້ານຂອງ ພັກປະຊາຊົນປະຕິວັດລາວ.

**10) ວົງມົນສີແດງ**



**ໝາຍເຖິງ** ກຳລັງແຮງຄວາມສາມັກຄີກົມກຽວ ເປັນຈິດໜຶ່ງໃຈດຽວ ແລະ ຄວາມເປັນເອກະພາບກັນຂອງຂະບວນການກອມມູນິດສາກົນ, ກຳມະກອນສາກົນ ແລະ ຂະບວນການກ້າວໜ້າໃນໂລກ.

**ມາດຕາ 5: ການຄຸ້ມຄອງ, ນຳໃຊ້ ແລະ ຂໍ້ຫ້າມ**

ເຄື່ອງໝາຍ ຄະນະພົວພັນຕ່າງປະເທດສູນກາງພັກ ເປັນລິຂະສິດນິຕິບຸກຄົນ ຢູ່ພາຍໃຕ້ການຄຸ້ມຄອງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ; ອົງການຈັດຕັ້ງພັກ, ລັດ, ອົງການຈັດຕັ້ງມະຫາຊົນ ແລະ ພະນັກງານ-ລັດຖະກອນ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ມີສິດນຳໃຊ້ເຄື່ອງໝາຍ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າໃນການເຄື່ອນໄຫວວຽກງານລັດຖະການ, ວຽກງານວິຊາສະເພາະ, ວຽກງານຂະບວນການລວມ ແລະ ວຽກງານອື່ນໆ ຕາມການຕົກລົງເຫັນດີ ຂອງການຈັດຕັ້ງ ແຕ່ລະຂັ້ນຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.

ຫ້າມນຳໃຊ້ເຄື່ອງໝາຍ ຄະນະພົວພັນຕ່າງປະເທດສູນກາງພັກ ໄປໃນທາງທີ່ບໍ່ຖືກຕ້ອງ, ຂັດຕໍ່ຮີດຄອງປະເພນີ, ລະບຽບການ ກໍ່ຄືກົດໝາຍຂອງ ສປປ ລາວ ຢ່າງເດັດຂາດ. ຫາກບຸກຄົນ ຫຼື ນິຕິບຸກຄົນໃດລະເມີດຂໍ້ຫ້າມທີ່ກຳນົດໄວ້ ຕ້ອງມີຄວາມຮັບຜິດຊອບຕໍ່ລະບຽບ ແລະ ກົດໝາຍ.

## ໝວດທີ III
## ບົດບັນຍັດສຸດທ້າຍ

**ມາດຕາ 6: ການຈັດຕັ້ງປະຕິບັດ**

ມອບໃຫ້ ຫ້ອງການ/ບັນດາກົມ ແລະ ອົງການຈັດຕັ້ງມະຫາຊົນ ທີ່ຂຶ້ນກັບ ຄະນະພົວພັນຕ່າງປະເທດສູນກາງພັກ ເປັນເຈົ້າການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 7: ການດັດແກ້ເຄື່ອງໝາຍຄະນະພົວພັນຕ່າງປະເທດສູນກາງພັກ**

ເຄື່ອງໝາຍຄະນະພົວພັນຕ່າງປະເທດສູນກາງພັກ ທີ່ຖືກຮັບຮອງໃນຂໍ້ຕົກລົງສະບັບນີ້ ຈະຖືກປັບປຸງ ຫຼື ດັດແກ້ໃນເວລາທີ່ເຫັນວ່າ ການຈັດຕັ້ງປະຕິບັດວຽກງານຕົວຈິງ ບໍ່ສອດຄ່ອງກັບສະພາບການໃນແຕ່ລະໄລຍະ ສາມາດຄົ້ນຄວ້າສະເໜີປັບປຸງ ຫຼື ດັດແກ້ ເປັນລາຍລັກອັກສອນ ໂດຍຜ່ານການເຫັນດີຂອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ.

**ມາດຕາ 8: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ສາມາດຈັດຕັ້ງປະຕິບັດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ**

ບຸນເຫຼືອ ພັນດານຸວົງ